# ຂັ້ນຕອນການຈັດຕັ້ງປະຕິບັດ ສວນຄົວໃນໂຮງຮຽນ

**ຂັ້ນຕອນທີ 1:** ຈັດກອງປະຊຸມຮ່ວມກັບຄູ, ນັກຮຽນ ໃນການຄັດເລືອກເອົາຄູຮັບຜິດຊອບ 1 ທ່ານ ແລະ ອາສາສະໝັກສວນຄົວໃນໂຮງຮຽນ ແລະ ສະເໜີຂໍຄະນະພັດທະນາການສຶກສາຂັ້ນບ້ານ 1 ທ່ານ ທີ່ມີຈິດໃຈອາສາ ເຂົ້າມາຊ່ວຍໂຮງຮຽນໃນການລະດົມຊຸມຊົນ.




**ຂັ້ນຕອນທີ 2:** ຈັດກອງປະຊຸມຮ່ວມກັບ ນ້ອງນັກຮຽນອາສາສະໝັກ ເພື່ອວາງແຜນ ແລະ ອອກແບບສວນຄົວ ໃນໂຮງຮຽນ ຮ່ວມກັນ.




**ຂັ້ນຕອນທີ 3:** ຈັດກອງປະຊຸມເຜີຍແຜ່, ສ້າງຄວາມເຂົ້າໃຈກ່ຽວກັບວຽກງານສວນຄົວໃນໂຮງຮຽນ ໃຫ້ແກ່ພໍ່ແມ່ປະຊາຊົນ ເພື່ອຂໍການສະໜັບສະໜູນດ້ານອຸປະກອນ, ແຮງງານ ໃນການຊ່ວຍກິດຈະກຳເຊັ່ນ: ການລ້ອມຮົ້ວສວນຄົວ, ການຫາອຸປະກອນກໍ່ສ້າງເກັບນ້ຳ, ການຂຸດໜານຜັກ ແລະ ອື່ນໆ.




**ຂັ້ນຕອນທີ 4:** ການຈັດຕັ້ງປະຕິບັດອອກແຮງງານຕົວຈິງໂດຍມີພໍ່-ແມ່ຜູ້ປົກຄອງ ແລະ ປະຊາຊົນພາຍໃນບ້ານ ມາເຕົ້າໂຮມກັນຢູ່ໂຮງຮຽນ ໂດຍມາສົມທົບກັບ ຄູ ແລະ ນັກຮຽນ ໃນການເຮັດຮົ້ວອອ້ມສວນ, ກຽມໜານທີ່ຈະປູກ, ວາງລະບົບລະບາຍນ້ຳ ແລະ ຈຸດຈ່າຍນ້ຳຫົດຜັກ.




**ຂັ້ນຕອນທີ 5:** ການປູກຕົວຈິງ ຄູພ້ອມກັບນ້ອງນັກຮຽນຈະໄດ້ ລົງມືປູກພືດທີ່ກຽມໄວ້ໃສ່ໜານ ຕາມແຜນການອອກແບບຜັງສວນ ເມື່ອປູກສຳເລັດແລ້ວໃຫ້ເຮັດຕາຕະລາງການປູກພືດ ແລະ ຕິດປ້າຍໜານທີ່ໄດ້ປູກ.




**ຂັ້ນຕອນທີ 6:** ຂັ້ນຕອນນີ້ ແມ່ນປະຕິບັດທັນທີຫຼັງການປູກເລີ່ມຕົ້ນ ໂດຍຄູຮັບຜິດຊອບຈະຕ້ອງໄດ້ສ້າງຕາຕະລາງ ແບ່ງຄວາມຮັບຜິດຊອບ ແລະ ແນະນຳນ້ອງນັກຮຽນອາສາສະໝັກໃນການ ບົວລະບັດຮັກສາຄື: ການກຳຈັດວັດສະພືດ, ການໃສ່ຝຸ່ນ, ການໃຫ້ນ້ຳ, ການບັນທຶກການຈະເລີນເຕີບໂຕຂອງພືດ.




**ຂັ້ນຕອນທີ 7:** ການເກັບກ່ຽວຜົນຜະລິດ ແມ່ນປະຕິບັດໃນທຸກຊ່ວງຂອງຊະນິດຜັກທີ່ພ້ອມຕໍ່ການເກັບກ່ຽວ ແຕ່ກ່ອນປິດສົກຮຽນຂອງແຕ່ລະພາກຮຽນ ຄວນມີມື້ໜຶ່ງໃນການເກັບກ່ຽວຮອບໃຫຍ່ທີ່ມີການແບ່ງຜັກໃຫ້ກັບ ນັກຮຽນ ແລະ ຄູທຸກຄົນໃນໂຮງຮຽນ ເພື່ອໃຫ້ທຸກຄົນມີຄວາມພູມໃຈ ແລະ ເປັນການໃຫ້ກຳລັງໃຈ ໃຫ້ກັບນັກ ຮຽນທຸກຄົນໃນການປູກຜັກໃນແຕ່ລະພາກຮຽນ, ການແບ່ງປັນຜົນຜະລິດຄວນແບ່ງດ້ວຍຄວາມສະເໝີພາບກັນ.




**ພວກເຮົາເຊື່ອວ່າ: ການປູກຈິດສຳນຶກ ແຕ່ຍັງເປັນເດັກນ້ອຍດ້ານການປູກຝັງ ແບບປອດໄພ ແລະ ແບບວິຊາການ ຈະຊ່ວຍໃຫ້ເດັກມີຄວາມຮູ້ ແລະ ຮັກ ໃນການເຮັດສວນຄົວໄວ້ກິນ ພາຍໃນ ຄອບຄົວຂອງພວກເຂົາເອງ.**

ສະຫະພາບ ເອີຣົບ European Union